ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 304/ນຍ

ນະຄອນຫຼວງວຽງຈັນ, ວັນທີ 01-11-2023

# ດຳລັດ
# ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການຄຸ້ມຄອງມໍຣະດົກແຫ່ງຊາດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍມໍຣະດົກແຫ່ງຊາດ ສະບັບເລກທີ່ 11 ສພຊ, ລົງວັນທີ່ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 442/ຖວທ, ລົງວັນທີ 29 ກັນຍາ 2023.

## ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1 ແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງມໍຣະດົກແຫ່ງຊາດ ຊຶ່ງປະກອບມີ ບັນດາທ່ານ ດັ່ງນີ້:

1. ທ່ານ ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນປະທານ;
2. ທ່ານ ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຮອງປະທານ ແລະ ຜູ້ປະຈຳການ;
3. ທ່ານ ຮອງລັດຖະມົນຕີ ກະຊວງການຕ່າງປະເທດ ເປັນຮອງປະທານ;
4. ທ່ານ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ;
5. ທ່ານ ຮອງລັດຖະມົນຕີ ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນກຳມະການ;
6. ທ່ານ ຮອງລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນກຳມະການ;
7. ທ່ານ ຮອງລັດຖະມົນຕີ ກະຊວງພາຍໃນ ເປັນກຳມະການ;
8. ທ່ານ ຮອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ;
9. ທ່ານ ຮອງລັດຖະມົນຕີ ກະຊວງຍຸຕິທຳ ເປັນກຳມະການ;
10. ທ່ານ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ;
11. ທ່ານ ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ເປັນກຳມະການ;
12. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
13. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ ເປັນກຳມະການ;
14. ທ່ານ ຮອງເຈົ້າແຂວງ, ຮອງເຈົ້າຄອງ, ຜູ້ຊີ້ນຳວຽກງານວັດທະນະທຳ ເປັນກຳມະການ.

**ມາດຕາ 2** ຄະນະດັ່ງກ່າວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງ ແຜນເຄື່ອນໄຫວ ແລະ ກົນໄກການປະຕິບັດວຽກງານ ຂອງ ຄະນະກຳມະການຄຸ້ມຄອງມໍຣະດົກແຫ່ງຊາດ ແລະ ອະນຸກຳມະການ ທີ່ກ່ຽວຂ້ອງ;
2. ຊີ້ນຳ ການຄົ້ນຄວ້າ ຍົກລະດັບ ມໍຣະດົກລະດັບທ້ອງຖິ່ນ ເປັນ ມໍຣະດົກລະດັບຊາດ ແລະ ຍົກລະດັບ ມໍຣະດົກລະດັບຊາດ ທີ່ມີຄວາມພ້ອມ ເປັນມໍຣະດົກລະດັບພາກພື້ນ, ລະດັບໂລກ ແລະ ຄວາມຊົງຈຳຂອງໂລກ ລະດັບພາກພື້ນ ແລະ ສາກົນ ໃຫ້ມີການຕໍ່ເນື່ອງ ຕາມກົນໄກ ແລະ ສອດຄ່ອງ ກັບ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ໂດຍຜ່ານການເຫັນດີ ຂອງລັດຖະບານ;
3. ຊີ້ນຳ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງມໍຣະດົກລະດັບຊາດ ຂອງ ສປປ ລາວ ທີ່ໄດ້ຖືກຮັບຮອງເປັນມໍຣະດົກລະດັບພາກພື້ນ, ລະດັບໂລກ ແລະ ຄວາມຊົງຈຳຂອງໂລກ ລະດັບພາກພື້ນ ແລະ ສາກົນໃຫ້ເປັນລະບົບ ມີຄວາມຮັດກຸມ ເພື່ອຄວາມຍືນຍົງ;
4. ຊີ້ນຳ ການຈັດຕັ້ງປະຕິບັດ ການຂຶ້ນບັນຊີ ມໍຣະດົກແຫ່ງຊາດ ທີ່ເປັນ ວັດຖຸ ແລະ ບໍ່ເປັນວັດຖຸ ຫຼື ເປັນຮູບມະທຳ ແລະ ນາມມະທຳ ໃຫ້ເປັນລະບົບໃນຂອບເຂດທົ່ວປະເທດ ແລະ ໃຫ້ສອດຄ່ອງ ຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;
5. ຊີ້ນຳ ການປະສານງານ ແລະ ອຳນວຍຄວາມສະດວກ ໃນການຮ່ວມມື ກັບ ພາກພື້ນ ແລະ ສາກົນ;
6. ຊີ້ນຳ ການສ້າງແຜນງົບປະມານ ເພື່ອຮອງຮັບ ການເຄື່ອໄຫວວຽກງານ ຂອງ ແຕ່ລະອະນຸກຳມະການ;
7. ແຕ່ງຕັ້ງ ແລະ ກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອະນຸກຳມະການ ທີ່ກ່ຽວຂ້ອງ ເພື່ອຊ່ວຍວຽກຄະນະກຳມະການຄຸ້ມຄອງມໍຣະດົກແຫ່ງຊາດ ແລະ ກອງເລຂາ ຂອງ ແຕ່ລະສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ຕາມຄວາມເໝາະສົມ;
8. ມີສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 3** ງົບປະມານໃນການເຄື່ອນໄຫວວຽກງານ ແລະ ການຈັດກອງປະຊຸມປະຈຳປີ ຂອງ ຄະນະກຳມະການຄຸ້ມຄອງມໍຣະດົກແຫ່ງຊາດ ແລະ ອະນຸກຳມະການ ທີ່ກ່ຽວຂ້ອງ ແມ່ນນຳໃຊ້ງົບປະມານ ຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 4** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 5** ດຳລັດສະບັບນີ້ ປ່ຽນແທນດຳລັດ ສະບັບເລກທີ 17/ນຍ, ລົງວັນທີ 05 ມັງກອນ 2017 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ